ປະກາດຮັບສະໝັກ

# ສະໝັກເຂົ້າຮ່ວມຊິງລາງວັນ “ຜູ້ສູງອາຍຸສຸຂະພາບດີສໍາລັບນະວັດຕະກໍາແຫ່ງອາຊີ” ຄັ້ງທີ 5!





ໃນ ໒໐ ປີຂ້າງໜ້າ ຄາດວ່າຈໍານວນປະຊາກອນ ທີ່ມີອາຍຸ ໖໕ ປີ ຫຼື ຫຼາຍກວ່າຈະເພີ່ມຂຶ້ນສອງເທົ່າຢູ່ໃນຂົງເຂດອາຊີຕາເວັນອອກສ່ຽງໃຕ້. ການມີຈໍານວນປະຊາກອນຜູ້ສູງອາຍຸແມ່ນມີຄວາມຈໍາເປັນທີ່ຈະຕ້ອງມີວິທີການຈັດການທີ່ສ້າງສັນຈາກທັງພາກລັດ ແລະ ເອກະຊົນເພື່ອຮັບມືກັບສິ່ງທ້າທາຍທີ່ຈະປະເຊີນຢູ່ໃນພາກພື້ນ ແລະ ເພື່ອສ້າງສັງຄົມທີ່ໜ້າຢູ່, ຜູ້ຄົນມີສຸຂະພາບດີ, ມີອາຍຸຍືນ ແລະ ໃຊ້ຊີວິດຢ່າງມີເປົ້າໝາຍ.

ລາງວັນໃນການເຮັດໃຫ້ຜູ້ສູງອາຍຸມີສຸຂະພາບທີ່ດີທີ່ເປັນນະວັດຕະກໍາຂອງອາຊີ (HAPI) ໄດ້ເລີ່ມຈັດຕັ້ງປະຕິບັດໃນປີ 2020 ເພື່ອຮັບເອົານະໂຍບາຍ, ການໃຫ້ບໍລິການ, ແລະ ຜະລິດຕະພັນທີ່ເປັນນະວັດຕະກໍາຈະອາຊີທີ່ຮັບມືກັບສິ່ງທ້າທາຍ ແລະ ໂອກາດສໍາລັບສັງຄົມຜູ້ສູງອາຍຸ, ຊ່ອຍໃນການຂະຫຍາຍການມີສຸຂະພາບທີ່ດີ ແລະ ໃຊ້ຊີວິດທີ່ມີຄວາມໝາຍ ແລະ ປັບປຸງວິທີການສະໜອງການດູແລສຸຂະພາບໃກ້ຜູ້ສູງອາຍຸ

ໄລຍະການສົ່ງແບບຟອມສະໝັກ

**ວັນທີ 2 ກຸມພາ ຫາ ວັນທີ 15 ມີນາ 2026**

ເພື່ອອ່ານຂໍ້ມູນເພີ່ມຕື່ມ ຫຼື ຍື່ນແບບຟອມສະໝັກໄດ້ທີ່ເວັບເວັບໄຊທ໌ :

**www.ahwin.org/award**

ເພື່ອດາວໂຫຼດແບບຟອມ

HEALTHY AGING PRIZE *for Asian* INNOVATION

# ປະເພດຂອງລາງວັນ

## ການດູແລ ແລະ ການມີຊີວິດການເປັນຢູ່ທີ່ດີ

ນະວັດຕະກຳທີ່ສະໜັບສະໜູນຜູ້ດູແລ ລວມທັງຜູ້ໃຫ້ບໍລິການດ້ານສຸຂະພາບ ແລະ ສະຫວັດດີການ ເພື່ອປັບປຸງສຸຂະພາບທາງຮ່າງກາຍ ແລະ ຈິດໃຈ ຕະຫຼອດຈົນເຖິງຄຸນນະພາບຊີວິດຂອງຜູ້ສູງອາຍຸ.



## ການມີສ່ວນຮ່ວມທາງສັງຄົມ

ນະວັດຕະກຳທີ່ຊ່ວຍໃຫ້ຜູ້ສູງອາຍຸຍັງຄົງມີສ່ວນຮ່ວມໃນຊຸມຊົນຂອງຕົນ ແລະ ເຊື່ອມໂຍງຄົນຕ່າງລຸ້ນເຂົ້າດ້ວຍກັນ.

## ສະພາບແວດລ້ອມທີ່ເອື້ອອຳນວຍ

ນະວັດຕະກຳທີ່ເຮັດໃຫ້ບ້ານເຮືອນ ຊຸມຊົນ ແລະ ລະບົບຂົນສົ່ງ ສາມາດເຂົ້າເຖິງໄດ້ງ່າຍ ແລະ ເໝາະສົມກັບຜູ້ສູງອາຍຸ.



## ເງື່ອນໄຂການຄັດເລືອກ

ນະວັດຕະກຳລວມທັງນະໂຍບາຍ, ໂຄງການ, ການບໍລິການ ແລະ ຜະລິດຕະພັນທີ່ສາມາດເອົາເຂົ້າສະໝັກຊີງລາງວັນທີ່ຈັດຕັ້ງ ປະຕິບັດໂດຍອົງການຈັດຕັ້ງຊຸມຊົນ, ອົງກອນທີ່ບໍ່ຫວັງຜົນກຳໄລ່, ສະຖາບັນຄົ້ນຄວ້າ, ລັດຖະບານໃນຂັ້ນທ້ອງຖິ່ນ, ທຸລະກິດເອກະຊົນ, ການຮ່ວມມືລະຫວ່າງພັກລັດ ແລະ ເອກະຊົນ, ທຸລະກິດທາງສັງຄົມ ທີ່ຢູ່ໃນປະເທດ ສະມາຄົມ ອາຊ່ຽນ ຫຼື ປະເທດຈີນ, ຍີ່ປຸ່ນ ແລະ ເກົາຫຼີໃຕ້. ສາມາດອ່ານຂໍ້ມູນເພີ່ມຕື່ມ ແລະ ຂໍ້ກຳນົດໄດ້ທີ່ ເວັບໄຊທ໌ .

*ສາມາດອ່ານຂໍ້ມູນເພີ່ມຕື່ມ ແລະ ຂໍ້ກຳນົດໄດ້ທີ່ ເວັບໄຊທ

## ລາງວັນ

ລາງວັນຊະນະເລີດ ໜຶ່ງລາງວັນ ທີ່ຈະຖືກຄັດເລືອກໃນແຕ່ລະປະເພດ ຂອງລາງວັນ ແລະ ຜູ້ເຂົ້າຮ່ວມທີ່ໄດ້ຮັບລາງວັນສຳຮອງຈະຖືກ ຄັດເລືອກເຊັ່ນດຽວກັນ. ຜູ້ຊະນະລາງວັນໝົດທຸກຄົນຈະໄດ້ຮັບການວາງ ສະແດງຮູບພາບຢູ່ໃນ ເວັບໄຊທ໌ AHWIN. ລາງວັນຊະນະເລີດ ຈະ ໄດ້ຮັບຖ້ວຍລາງວັນ ແລະ ຈະຖືກເຊີນໃຫ້ຂຶ້ນນຳສະເໜີຜົນງານຂອງຕົນ ໃຫ້ກັບຜູ້ນຳຂັ້ນສູງສຸດໃນພາກພື້ນ.

ກຳນົດເວລາ: **15 ພຶດສະພາ 2026**

ລາງວັນນະວັດຕະກຳຜູ້ສູງອາຍຸແຫ່ງອາຊີແມ່ນໜຶ່ງໃນໂຄງການຂອງສະຖາບັນຄົ້ນຄວ້າເສດຖະກິດຂອງສະມາຄົມ ອາຊ່ຽນ ແລະ ອາຊີເຂດຕາເວັນອອກ (ERIA), ສູນແລກປ່ຽນສາກົນແຫ່ງປະເທດຍີ່ປຸ່ນ (JCIE), ພາຍໃຕ້ຄວາມເຈດຈຳນົງອັນດີງາມຂອງລັດຖະບານຍີ່ປຸ່ນຕໍ່ກັບ ໂຄງການ ສົ່ງເສີມການມີສຸຂະພາບດີ ແລະ ຊີວິດການເປັນຢູ່ທີ່ດີແຫ່ງ ອາຊີ (AHWIN).

Supporters